ເຮັດໃຫ້ປຽກ ແລະ ພັບເຂົ້າເພື່ອຈະຕິດ

ໃບຟອມຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງສົ່ງມາທາງໄປສະນີ

Washington Secretary of State

ຈົ່ງໃຊ້ປາກກາສີດຳ ຫລື ສີຟ້າເທົ່ານັ້ນ-ກະຮຸນາຂຽນເປັນຕົວພິມຢ່າງແຈ່ມແຈ້ງ ☐ ການປ່ຽນແປງໃນຊື່ ☐ ການປ່ຽນແປງໃນທີ່ຢູ່ ☐ ການເຊັນລາຍເຊັນໃຫມ່ ☐ ການຈົດຊື່ລົງທະບຽນໃຫມ່

1 ຫມາຍເຫດ: ການຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງຕ້ອງໃຫ້ມີສັນຊາດ U.S.

ທ່ານຈະມີອາຍຸຢ່າງຕ່ຳ 18 ປີ ຫລື ແກ່ກວ່າບໍ່ກ່ອນວັນເລືອກຕັ້ງ? ◯ ແມ່ນ ◯ ບໍ່ແມ່ນ

ທ່ານເປັນສັນຊາດອະເມຣິກັນບໍ່? ◯ ແມ່ນ ◯ ບໍ່ແມ່ນ

ສຳລັບຫ້ອງການໃຊ້ເທົ່ານັ້ນ

ກົດຫມາຍຂອງຣັຖບານກາງ ແລະ ຂອງຣັດບິ່ງໃຫ້ທ່ານທີ່ຈະເອົາເລກໃບຂັບຂີ່ຂອງຣັດວໍຊິງຕັນໃຫ້ ຫລື ເລກຂອງບັດ ID ປະຈຳຕົວຂອງຣັດວໍຊິງຕັນໃຫ້. ຖ້າຫາກວ່າທ່ານບໍ່ມີໃບຂັບຂີ່ຂອງຣັດວໍຊິງຕັນ ຫລື ບັດ ID ປະຈຳຕົວຂອງຣັດວໍຊິງຕັນ, ຈົ່ງບອກເລກສີ່ຕົວສຸດທ້າຍຂອງເລກໂຊໂຊຂອງທ່ານ.

2	ກ. ເລກໃບຂັບຂີ່ ຫລື ບັດ ID ຂອງຣັດວໍຊິງຕັນ	ຂ. ເລກສີ່ຕົວສຸດທ້າຍຂອງບັດ SSN	◯ ຫມາຍໃສ່ບອນນີ້ຖ້າຫາກວາທານບໍ່ມີໃບຂັບຂີ່ຂອງຣັດວໍຊິງຕັນ, ບັດ ID ຫລື ເລກ SSN.	**3** ວັນເກີດ (ເດືອນ/ວັນ/ປີ)
4	ນາມສະກຸນ		◯ ຊາຍ ◯ ຍິງ	ເລກໂທຣະສັບກາງເວັນ ( )
5	ຊື່	ຊື່ກາງ	◯ Jr. ◯ II ◯ Sr. ◯ III	ທີ່ຢູ່ອີ່ແມລ້ (ຕາມໃຈ)
6	ທີ່ຢູ່ເຮືອນ/ຕົວຈິງຢູ່ຣັດວໍຊິງຕັນ (ຕ້ອງມີ)	ເມືອງ ຫລື ບ້ານ	ຊີບໂຄດ	
7	ທີ່ຢູ່ບ່ອນທີ່ທ່ານໄດ້ຮັບຫນັງສືໄປສະນີຂອງທ່ານ (ຖ້າແຕກຕ່າງຈາກທີ່ຢູ່ເຮືອນ/ຕົວຈິງ)	ເມືອງ ຫລື ບ້ານ	ຣັດ	ຊີບໂຄດ

8 ຫມາຍໃສ່ທຸກໆຢ່າງທີ່ກ່ຽວຂ້ອງໃນປັດຈຸບັນ ◯ ທະຫານພາຍໃນປະເທດ ◯ ທະຫານຕ່າງປະເທດ ◯ ຫນ່ວຍປ້ອງກັນຊາດ/ຫນ່ວຍສຳລອງ ◯ ຄົນສັນຊາດອະເມຣິກັນຢູ່ຕ່າງປະເທດ

9 **ຄຳຮ້ອງຂໍປ່ອນບັດມາບໍ່ໄດ້ຕລອດໄປ** **ຫມາຍເຫດ:** ຖ້າຫາກວ່າເທສບານຂອງທ່ານຕ້ອງໄດ້ປ່ອນບັດທາງໄປສະນີ, ບໍ່ຕ້ອງຂຽນປະກອບພາກສ່ວນນີ້. ໃບປ່ອນບັດຈະຖືກສົ່ງໄປໃຫ້ທ່ານໄປໃນຕົວໂລດ. ຂ້າພະເຈົ້າຕ້ອງການຮັບເອົາໃບປ່ອນບັດມາບໍ່ໄດ້ສຳລັບການເລືອກຕັ້ງໃນອະນາຄົດທຸກໆເທື່ອ. ◯ ແມ່ນ ◯ ບໍ່ແມ່ນ

ພັບບ່ອນນີ້

10 ຫມາຍເຫດ: ຣາຍລະອຽດຂອງການຈົດຊື່ລົງທະບຽນໃນຜ່ານມາ

ຂ້າພະເຈົ້າໄດ້ຈົດຊື່ລົງທະບຽນໃນຜ່ານມາພາຍໄຕ້ຊື່ ແລະ ທີ່ຢູ່ອັນນີ້:

ຊື່ _____

ທີ່ຢູ່ _____ ເທສບານ _____

ເມືອງ _____ ຣັດ_____ ຊີບໂຄດ _____

ເຊັນຊື່ຄືກັນກັບໄດ້ຈົດຊື່ລົງທະບຽນໃນຜ່ານມາ

X

ຄຳເຕືອນ: ຖ້າຫາກວ່າທ່ານໄດ້ເອົາຣາຍລະອຽດທີ່ບໍ່ຖືກຕ້ອງໃຫ້ຢ່າງຮູ້ຈັກດີໃສ່ໃນໃບຟອມຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງໃບນີ້ ຫລື ໃຫ້ຄຳແຈ້ງການທີ່ບໍ່ຖືກຕ້ອງຢ່າງຮູ້ຈັກດີກ່ຽວກັບຄຸນນະວິດທີຂອງທ່ານສຳລັບການຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງ, ທ່ານຈະໄດ້ເຮັດການກະທຳຜິດກົດຫມາຍອາດຍາຂະແນງ C ຊຶ່ງຈະຖືກລົງໂທດໄດ້ໂດຍການຈຳຄຸກເຖິງຫ້າປີ, ຫລື ການປັບໃຫມໄປເຖິງສິບພັນດອນ ຫລື ທັງການຈຳຄຸກ ແລະ ການປັບໃຫມທັງສອງຢ່າງ (RCW 29A.08.210)

11 ຄຳແຈ້ງການຂອງຜູ້ປ່ອນບັດເລືອກຕັ້ງ

ໂດຍການເຊັນຊື່ໃສ່ເອກສານອັນນີ້, ຂ້າພະເຈົ້າຢືນຢັນວ່າ, ພາຍໄຕ້ການປັບໃຫມລົງໂທດຂອງການເວົ້າເທັດ, ຂ້າພະເຈົ້າມີສິດຕາມກົດຫມາຍທີ່ຈະປ່ອນບັດເລືອກຕັ້ງ. ຖ້າຫາກວ່າຂ້າພະເຈົ້າໄດ້ຖືກພົບວ່າໄດ້ປ່ອນບັດເລືອກຕັ້ງໂດຍຜິດຕໍ່ກົດຫມາຍ, ຂ້າພະເຈົ້າຈະຖືກຟ້ອງຂຶ້ນສານ ແລະ/ຫລື ປັບໃຫມສຳລັບການກະທຳຜິດຕໍ່ກົດຫມາຍອັນນີ້. ເພີ້ມເຕີມອີກ, ຂ້າພະເຈົ້າໃນທີ່ນີ້ຮັບຮູ້ວ່າຊື່ຂອງຂ້າພະເຈົ້າ ແລະ ທີ່ຢູ່ບ່ອນທີ່ຮູ້ຈັກບ່ອນສຸດທ້າຍຫມູ່ຂອງຂ້າພະເຈົ້າຈະຖືກສົ່ງຕໍ່ໄປຫາຣັດ ແລະ/ຫລື ເຈົ້າຫນ້າທີ່ຂອງຣັຖບານກາງທີ່ກ່ຽວຂ້ອງຖ້າຫາກວ່າຂ້າພະເຈົ້າໄດ້ຖືກພົບວ່າໄດ້ປ່ອນບັດເລືອກຕັ້ງຜິດຕໍ່ກົດຫມາຍ. (RCW 29A.08.210)

- ຂ້າພະເຈົ້າຂໍແຈ້ງການວ່າຂໍ້ມູນຄວາມຈິງຢູ່ໃນໃບຟອມຈົດຊື່ລົງທະບຽນໃບນີ້ເປັນຄວາມຈິງ;
- ຂ້າພະເຈົ້າເປັນຄົນສັນຊາດອະເມຣິກັນ;
- ຂ້າພະເຈົ້າບໍ່ໄດ້ຖືກປະຕິເສດໃນປັດຈຸບັນນີ້ໃນສິດທິພົລເມືອງຂອງຂ້າພະເຈົ້າເມື່ອງເປັນຜົນອອກມາຈາກການຖືກຕັດສິນລົງໂທດຄະດີອາດຍາ;
- ຂ້າພະເຈົ້າຈະໄດ້ອາສັຍຢູ່ໃນຣັດວໍຊິງຕັນຢູ່ທີ່ຢູ່ນີ້ເປັນເວລາສາມສິບວັນທັນທີ່ກ່ອນການເລືອກຕັ້ງເທື່ອຕໍ່ໄປຊຶ່ງຂ້າພະເຈົ້າຈະປ່ອນບັດເລືອກຕັ້ງ;
- ຂ້າພະເຈົ້າມີອາຍຸຢ່າງຫນ້ອຍສິບແປດປີເມື່ອຂ້າພະເຈົ້າປ່ອນບັດເລືອກຕັ້ງ.

(RCW 29A.08.230)

ເຊັນຊື່ ຫລື ຫມາຍໃສ່ໃນບ່ອກ

X

12 ຖ້າຫາກວາທານບໍ່ສາມາດເຊັນຊື່ຂອງທ່ານໄດ້ໂດຍຕົນເອງ, ກະຮຸນາໃຫ້ບຸກຄົນຜູ້ທີ່ຊ່ວຍເຫລືອທ່ານໃນການຂຽນປະກອບຟອມໃບນີ້ບອກ:

ຊື່

ທີ່ຢູ່

ວັນທີເຊັນຊື່ ___/___/___ ເດືອນ/ວັນ/ປີ

MI 3/07

ເມືອງ _____

ສະແຕມຕ້ອງມີ
ກົມໄປສະນີຈະບໍ່ສົ່ງ
ຖ້າບໍ່ມີສະແຕມທີ່
ຖືກຕ້ອງ

OFFICIAL ELECTION MAIL
Authorized by the U.S. Postal Service ®

SECRETARY OF STATE
VOTER REGISTRATION BY MAIL
PO BOX 40230
OLYMPIA WA 98504-0230

ສຳຄັນ

ເພື່ອຈະລົງທະບຽນເພື່ອຈະປ່ອນບັດເລືອກຕັ້ງ, ທ່ານຕ້ອງເປັນ:

- ✔ ປະຊາຊົນຂອງສະຫາຣັດອະເມຣິກາ
- ✔ ຜູ້ອາສັຍຢູ່ຖືກຕ້ອງຕາມກົດຫມາຍຂອງຣັດວໍຊິງຕັນ
- ✔ ຢ່າງຫນ້ອຍອາຍຸ 18 ປີກ່ອນວັນເລືອກຕັ້ງ

ໃບຟອມຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງສົ່ງມາທາງໄປສະນີ

ທ່ານຈະໃຊ້ຟອມໃບນີ້ໄດ້ເພື່ອຈະ:

- ຈົດຊື່ລົງທະບຽນເພື່ອຈະປ່ອນບັດເລືອກຕັ້ງຢູ່ໃນຣັດວໍຊິງຕັນ
- ດັດແປງຣາຍລະອຽດກ່ຽວກັບຊື່ ຫລື ທີ່ຢູ່ຂອງທ່ານ
- ຮ້ອງຂໍເອົາໃບປ່ອນບັດມາບໍ່ໄດ້ຕລອດ

ກະຣຸນາຂຽນປະກອບຣາຍລະອຽດທຸກໆຢ່າງຢູ່ໃນບ່ອກທີນຶ່ງໄປຮອດ 11. ເມື່ອທ່ານໄດ້ຂຽນປະກອບຟອມໃບນີ້ແລ້ວ, ໃຫ້ພັບ, ຕິດ ແລະ ສົ່ງໄປສະນີ.

ຖ້າຫາກວ່າທ່ານໄດ້ຖືກຕັດສິນລົງໂທດໃນຄະດີອາດຍາ, ທ່ານຕ້ອງມີສິດທິຂອງທ່ານຖືກປົວແປງຄືນກ່ອນທີ່ທ່ານຈະຈົດຊື່ລົງທະບຽນເພື່ອຈະປ່ອນບັດເລືອກຕັ້ງ!

ຣັກສາການຈົດຊື່ລົງທະບຽນຂອງທ່ານໃຫ້ທັນຕາມເວລາ!

ທ່ານຈະບໍ່ສາມາດທີ່ຈະ່ປ່ອນບັດເລືອກຕັ້ງໃນການເລືອກຕັ້ງເທື່ອຫນ້າຖ້າຫາກວ່າກົມການເລືອກຕັ້ງຂອງເທສະບານຂອງທ່ານບໍ່ມີຊື່ ຫລື ທີ່ຢູ່ປັດຈຸບັນຂອງທ່ານຢູ່ໃນສຳນວນ. ຈົ່ງໃຊ້ຟອມໃບນີ້ເພື່ອຈະດັດແປງຣາຍລະອຽດຂອງທ່ານ.

ຫມາຍເຫດ: ເພື່ອຈະປ່ອນບັດເລືອກຕັ້ງໃນການເລືອກຕັ້ງເທື່ອຫນ້າ, ໃບຟອມຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງສົ່ງມາທາງໄປສະນີຕ້ອງໄດ້ຖືກ**ຕີກາໄປສະນີ**ຢ່າງຫັນອຍ 30 ວັນກ່ອນການເລືອກຕັ້ງເທື່ອຫນ້າ. ຖ້າຫາກວ່າທ່ານພາດວັນທີຕາຍຕົວອັນນີ້, ການຈົດຊື່ລົງທະບຽນຂອງທ່ານຈະໃຊ້ການບໍ່ໄດ້ຈົນກວ່າການເລືອກຕັ້ງເທື່ອຕໍ່ໄປ. ຖ້າຫາກວ່າທ່ານບໍ່ໄດ້ຈົດຊື່ລົງທະບຽນເພື່ອຈະປ່ອນບັດເລືອກຕັ້ງໃນປັດຈຸບັນນີ້ຢູ່ໃນຣັດວໍຊິງຕັນ, ທ່ານຈະຈົດຊື່ລົງທະບຽນທີ່ຈະປ່ອນບັດເລືອກຕັ້ງໄດ້ອີກຄືກັນໂດຍຕົນເອງຢູ່ທີ່ກົມການເລືອກຕັ້ງຂອງເທສບານຂອງທ່ານຮອດ 15 ວັນກ່ອນການເລືອກຕັ້ງທຸກໆເທື່ອ.

ຖ້າຫາກວ່າທ່ານກຳລັງຈົດຊື່ລົງທະບຽນເພື່ອຈະປ່ອນບັດເລືອກຕັ້ງເປັນເທື່ອທຳອິດຢູ່ໃນຣັດວໍຊິງຕັນ, ສົ່ງຟອມໃບນີ້ມາທາງໄປສະນີ, ແລະ ບໍ່ໄດ້ຂຽນປະກອບບ່ອກສອງຂໍ້ A ຫລື B, ທ່ານຕ້ອງສົ່ງໂກປີຂອງ:

- ບັດ ID ມີຮູບປັດຈຸບັນ;
- ໃບບິນຄ່ານ້ຳຄ່າໄຟປັດຈຸບັນ;
- ໃບແຈ້ງການຈາກທະນາຄານ;
- ເຊັກເງິນຂອງຣັຖບານ;
- ສົ້ນເຊັກເງິນ;ຫລື
- ເອກສານຂອງຣັຖບານແນວອື່ນໆສະແດງໃຫ້ເຫັນຊື່ແລະທີ່ຢູ່ຂອງທ່ານ.

ຄຳຖາມ?

ຈົ່ງຕິດຕໍ່ໄປຫາກົມການເລືອກຕັ້ງຂອງເທສບານຂອງທ່ານ (ພາຍໄຕ້ລາຍຊື່ຂອງຣັຖບານຢູ່ໃນປື້ມໂທຣະສັບຂອງທ່ານ) ຫລື ໂທຣະສັບໄປຫາໂທຣະສັບສາຍດ່ວນຂອງຣາຍລະອຽດສຳລັບຜູ້ປ່ອນບັດເລືອກຕັ້ງເລກໂທຟຣີຂອງສະມຽນຂອງຣັດໄດ້ທີ່ເລກ 1-800-448-4881 (TTY/TDD 1-800-422-8683). ຣາຍລະອຽດ ແລະ ການຊ່ວຍເຫລືອກໍ່ຍັງມີໃວ້ໃຫ້ທາງອິນເຕີແນດໄດ້ທີ່ **www.vote.wa.gov.**